ການຊ່ວຍເຫຼືອດ້ານພາສາ

ຊຸມຊົນທີ່ເກີດໃໝ່ (Newleaf Communities) ໃຫ້ການຊ່ວຍເຫຼືອດ້ານພາສາ ແລະ ບໍຣິການຕ່າງໆ ຢ່າງຫຼວງຫຼາຍ ແກ່ຜູ້ອາໃສ ທີ່ຢູ່ໃນເຂດ ບອນນີຣິກ.

ພວກເຮົາມີບໍຣິການ ດ້ານແປພາສາທາງໂທຣະສັບຟຣີ, ມີບັນດາພະນັກງານປາກສອງພາສາ ທີ່ເຮັດວຽກແບບເຕັມເວລາ ຊຶ່ງສາມາດປາກພາສາຂອງຊຸມຊົນຕ່າງໆໄດ້, ແລະ ຍັງໃຫ້ບໍຣິການອູ້ມຊູແບບເປັນທີມເພື່ອຊ່ວຍເຫຼືອບັນດາຜູ້ອາໃສ ໃຫ້ເຊື່ອມຕໍ່ກັບບັນດາໂຄງການຊ່ວຍເຫຼືອຕ່າງໆທັງຂອງຣັຖບານ ແລະ ອົງການຊຸມຊົນອີກດ້ວຍ.

ບໍຣິການການແປພາສາທາງໂທຣະສັບ
ຖ້າທ່ານຕ້ອງການໂທຫາ ຊຸມຊົນທີ່ເກີດໃໝ່ (Newleaf Communities) ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ແລະ ຖ້າທ່ານມີບັນຫາໃນການເຂົ້າໃຈຫຼື ປາກພາສາອັງກິດ, ພຽງແຕ່ໂທຫາໝາຍເລກ 1300 137 265 ແລະ ບອກວ່າທ່ານປາກພາສາຫຍັງ ພ້ອມທັງບອກຊື່ແລະເລກໂທຣະສັບ. ພວກເຮົາຈະໂທມາຫາທ່ານຄືນ ພ້ອມທັງມີນາຍພາສາດ້ວຍ.
ສຳລັບບັນຫາການສ້ອມແປງສຸກເສີນ ບໍຣິການນີ້ກໍມີໄວ້ບໍຣິການ 24ຊົ່ວໂມງຕໍ່ມື້ ເຈັດມື້ຕໍ່ອາທິດ.
ສຳລັບການສອບຖາມອື່ນໆທົ່ວໄປ ບໍຣິການນີ້ມີໄວ້ໃຫ້ຈາກ 9 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ ຫາ ວັນສຸກ.

ພະນັກງານປາກສອງພາສາ
ຢູ່ໃນຫ້ອງການ ພວກເຮົາມີພະນັກງານທີ່ປາກສອງພາສາຫຼາຍຄົນ ຊຶ່ງປາກພາສາຕ່າງໆໄດ້ເຊັ່ນ ພາສາຂແມນ, ຫວຽດນາມ, ຈີນກວາງຕຸ້ງ, ຈີນກາງ, ອາຣາບິກ, ຊາໂມນ, ເຊີບຽນ, ບອສນຽນ, ໂຄຣເອຊຽນ, ມາເຊໂດນຽນ, ກຣີກ ແລະ ອີຕາລຽນ.

ພະນັກງານອູ້ມຊູຊຸມຊົນ ຂອງພວກເຮົາກໍມີໄວ້ເພື່ອຊ່ວຍທ່ານໃນດ້ານບັນຫາຕ່າງໆເດືອນລະເທື່ອຢູ່ທີ່ ຫ້ອງການຂອງ Newleaf Communities ທີ່ ຫ້ອງເບີ 38 Bonnyrigg Plaza. ກະຣຸນາໂທຣະສັບຫາໝາຍເລກ 1300 137 265 ເພື່ອກວດເບິ່ງເວລາທີ່ພວກເຂົາໃຫ້ບໍຣິການໃນແຕ່ລະເດືອນ.

ບັນດາພະນັກງານອູ້ມຊູຊຸມຊົນ ຂອງພວກເຮົາຍັງເປີດຣາຍການກິນກາເຟສັງສັນກັນ
ເປັນປະຈຳສຳລັບກຸ່ມຊຸມຊົນ ທີ່ປາກພາສາ ຕໍ່ລົງໄປນີ້:

| | |
|---|---|
| ATSI | ລາວ |
| ອາຣາບິກ | ຂແມນ |
| ອັຊຊີຣຽນ | ສະເປນ |
| ອັງກິດ | ຫວຽດນາມ |

ຂໍໃຫ້ກວດເບິ່ງປະຕິທິນຂອງພວກເຮົາເພື່ອເອົາຣາຍລະອຽດຕື່ມ ຫຼື ໂທຣະສັບຫາໝາຍເລກ 1300 137 265.